ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 03 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 11 . 2 . 2016

# ຄຳສັ່ງ
# ວ່າດ້ວຍ ການກັກ, ການຍຶດ ແລະ ການອາຍັດ ທຶນທີ່ພົວພັນກັບ ຜູ່ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ

ເຖິງ: ຄະນະກຳມະການແຫ່ງຊາດເພື່ອຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
ບັນດາກະຊວງ, ອົງການທຽບເທົ່າກະຊວງ;
ອົງການປົກຄອງທ້ອງຖິ່ນ;
ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ.

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມໜັງສືສະເໜີຂອງປະທານຄະນະກຳມະການແຫ່ງຊາດເພື່ອຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບ ເລກທີ 04/ຄຕຟງ, ລົງວັນ 04 ກຸມພາ 2016.

ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຕ້ານ ສະກັດກັ້ນ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍມີປະສິດທິພາບ ແລະ ສອດຄ່ອງກັບຫຼັກການຂອງສາກົນ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ ສະບັບປັບປຸງ:

1. ມອບໃຫ້ຄະນະກຳມະການແຫ່ງຊາດເພື່ອຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ), ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ປະຕິບັດຕາມຂັ້ນຕອນ, ວິທີການໃນການກັກ, ການຍຶດ ແລະ ການອາຍັດ ແລະ ແກ້ໄຂ ທຶນທີ່ພົວພັນກັບຜູ່ກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການກຳນົດບັນຊີລາຍຊື່ຜູ່ ທີ່ພົວພັນກັບຜູ່ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ໄດ້ກຳນົດໄວ້ໃນຄຳສັ່ງສະບັບນີ້.

2. ທຶນ ທີ່ຕ້ອງກັກ, ຍຶດ ແລະ ອາຍັດ ແມ່ນທຶນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂໍ້ 5 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງມີສ່ວນກ່ຽວຂ້ອງ ດັ່ງນີ້:

2.1 ທຶນ ແລະ ຜົນທີ່ໄດ້ມາຈາກທຶນ ທີ່ເປັນກຳມະສິດ ຫຼື ຢູ່ໃນການຄອບຄອງ ແລະ ການຄວບຄຸມ ທາງກົງ ຫຼື ທາງອ້ອມສ່ວນໃດສ່ວນໜຶ່ງ ຫຼື ທັງໝົດຂອງຜູ້ທີ່ຖືກກຳນົດຢູ່ໃນບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2.2 ທຶນ ທີ່ເປັນກຳມະສິດ ຫຼື ຢູ່ໃນການຄອບຄອງ ແລະ ການຄວບຄຸມ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຖືກຳມະສິດແທນ ຫຼື ຢູ່ພາຍໃຕ້ການຄວບຄຸມບັນຊາຂອງຜູ້ທີ່ຖືກກຳນົດຢູ່ໃນບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2.3 ທຶນ ທີ່ສະໜອງ ຫຼື ມີຈຸດປະສົງ ຈະສະໜອງໃຫ້ແກ່ການກໍ່ການຮ້າຍ ລວມທັງທຶນທີ່ໄດ້ມາຈາກການກະທຳທີ່ເປັນການກໍ່ການຮ້າຍ.

**3.** ການກຳນົດບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ປະຕິບັດ ດັ່ງນີ້:

3.1 ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ສຳນັກງານຂໍ້ມູນຕ້ານການຟອກເງິນ, ກະຊວງ ແລະ ອົງການ ທີ່ກ່ຽວຂ້ອງ ຄົ້ນຄວ້າສະເໜີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕໍ່ ຄຕຟງ ພິຈາລະນາເພື່ອຮັບຮອງ.

ການເອົາລາຍຊື່ເຂົ້າ ຫຼື ອອກບັນຊີ ຕ້ອງອີງຕາມແຫຼ່ງທີ່ມາຕົ້ນຕໍ ດັ່ງນີ້:

3.1.1 ຜົນຂອງການດຳເນີນຄະດີ ແລະ ການພິຈາລະນາ ຂອງອົງການຕຸລາການທີ່ມີສິດອຳນາດ;

3.1.2 ຜົນຈາກການພິຈາລະນາ ໂດຍກະຊວງປ້ອງການຄວາມສະຫງົບ, ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ກະຊວງການຕ່າງປະເທດ ຊຶ່ງໄດ້ສະໜອງຫຼັກຖານກ່ຽວກັບພຶດຕິກຳ ຫຼື ການກະທຳ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 3 ແລະ 7 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

3.1.3 ການຮ້ອງຂໍຈາກລັດຕ່າງປະເທດ ຊຶ່ງໄດ້ສະໜອງຫຼັກຖານກ່ຽວກັບພຶດຕິກຳ ຫຼື ການກະທຳ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 3 ແລະ 7 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

3.2 ທຸກການສະເໜີໃຫ້ຕື່ມລາຍຊື່ເຂົ້າ ຫຼື ເອົາອອກຈາກ ບັນຊີ ພາຍໃນ ຫຼື ຕ່າງປະເທດຮ້ອງຂໍ ແມ່ນຕ້ອງສົ່ງໃຫ້ ຄຕຟງ ພິຈາລະນາ. ຖ້າ ຄຕຟງ ພິຈາລະນາແລ້ວ ເຫັນວ່າມີຫຼັກຖານໜັກແໜ້ນ ຄຕຟງ ຕ້ອງຮັບຮອງເອົາຕາມການສະເໜີດັ່ງກ່າວ.

3.3 ບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ກໍ່ການຮ້າຍ ຕ້ອງລວມເອົາບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ຖືກກຳນົດລາຍຊື່ ໂດຍສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ (ອົງການ ສປຊ) ຫຼື ຄະນະກຳມະການຂອງສະພາຄວາມໝັ້ນຄົງ ອົງການ ສປຊ ທີ່ຖືກສ້າງຂຶ້ນພາຍໃຕ້ຍັດຕິຂອງສະພາຄວາມໝັ້ນຄົງ ອົງການ ສປຊ ສະບັບເລກທີ 1267 (ປີ 1999), 1988 (ປີ 2011), 1989 (ປີ

2011), 2253 (ປີ 2015) ແລະ ບັນດາຍັດຕິອື່ນໆ ໂດຍບໍ່ຈຳເປັນຕ້ອງຜ່ານການຄົ້ນຄວ້າ ແລະ ຮັບຮອງຈາກ ຄຕຟງ;

3.3.1 ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3.3 ຂອງຄຳສັ່ງສະບັບນີ້ ຕ້ອງຖືກລວມເຂົ້າໃນ ບັນຊີລາຍຊື່ຂອງຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍທັນທີ ເມື່ອທາງສະພາຄວາມໝັ້ນຄົງ ອົງການ ສປຊ ຫຼື ຄະນະກຳມະການຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໄດ້ກຳນົດລາຍຊື່ຂອງເຂົາເຈົ້າ ເຂົ້າໃນບັນຊີລາຍຊື່ດັ່ງກ່າວ;

3.3.2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3.3 ຂອງຄຳສັ່ງສະບັບນີ້ ຕ້ອງຍັງຄົງຢູ່ໃນ ບັນຊີລາຍຊື່ຂອງຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຈົນກ່ວາສະພາຄວາມໝັ້ນຄົງ ອົງການ ສປຊ ຫຼື ຄະນະກຳມະການຂອງສະພາຄວາມໝັ້ນຄົງ ອົງການ ສປຊ ຈະຍົກເລີກລາຍຊື່ຂອງເຂົາເຈົ້າ ອອກຈາກບັນຊີລາຍຊື່.

3.4 ມອບໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ, ກະຊວງ ແລະ ອົງການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ ຕິດຕາມ ແລະ ກວດກາ ລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢ່າງເປັນປະຈຳ ແລ້ວສະເໜີຕໍ່ກະຊວງປ້ອງກັນຄວາມສະຫງົບ ເພື່ອປັບປຸງບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍດັ່ງກ່າວ.

3.5 ການແຈ້ງບັນຊີລາຍຊື່ ແລະ ການສະເໜີ ເອົາເຂົ້າ-ເອົາອອກຈາກ ບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໃຫ້ປະຕິບັດ ດັ່ງນີ້:

3.5.1 ມອບໃຫ້ກະຊວງການຕ່າງປະເທດ ນຳສົ່ງບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ ໄປຍັງກະຊວງປ້ອງກັນຄວາມສະຫງົບ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ ໂດຍທັນທີ ເມື່ອໄດ້ຮັບບັນຊີລາຍຊື່ດັ່ງກ່າວ ຈາກອົງການ ສປຊ;

3.5.2 ມອບໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ເປັນຜູ້ແຈ້ງບັນຊີລາຍຊື່ ສະບັບປັບປຸງ ໄປຍັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ໂດຍທັນທີ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ແຈ້ງບັນຊີລາຍຊື່ດັ່ງກ່າວ ໄປຍັງວິສາຫະກິດໄປສະນີ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍທັນທີ ພ້ອມທັງເຜີຍແຜ່ຜ່ານທາງເວັບໄຊຂອງລັດຖະບານ ຫຼື ເວັບໄຊຂອງອົງການຈັດຕັ້ງລັດກ່ຽວຂ້ອງ ຢ່າງເປັນປົກກະຕິ;

3.5.3 ກໍລະນີ ຫາກມີຂໍ້ມູນຫຼັກຖານວ່າມີບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຖືກຕາມເງື່ອນໄຂຂອງການກຳນົດລາຍຊື່ ຕາມທີ່ໄດ້ລະບຸໄວ້ໃນຍັດຕິຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໄດ້ວາງອອກບົນພື້ນຖານ ໝວດທີ VII ຂອງກົດບັດອົງການ ສປຊ ທີ່ກຳລັງເຄື່ອນໄຫວຢູ່ ແຕ່ຍັງບໍ່ໄດ້ເອົາເຂົ້າໃນບັນຊີລາຍຊື່ ຕາມການກຳນົດຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໃຫ້ກະຊວງປ້ອງກັນຄວາມສະຫງົບເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ສຳນັກງານຂໍ້ມູນຕ້ານການຟອກເງິນ, ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາສະເໜີເອົາເຂົ້າໃນບັນຊີລາຍຊື່ ຂອງສະພາຄວາມໝັ້ນຄົງ ອົງການ ສປຊ.

ກໍລະນີ ພາຍຫຼັງການປະສານງານຂອງກະຊວງປ້ອງກັນຄວາມສະຫງົບ ຕາມທີ່ໄດ້ກໍານົດໄວ້ໃນວັກທີໜຶ່ງຂອງຂໍ້ນີ້ ຊຶ່ງກະຊວງປ້ອງກັນຄວາມສະຫງົບ ໄດ້ພິຈາລະນາແລ້ວ ເຫັນວ່າມີຫຼັກຖານພຽງພໍທີ່ຢັ້ງຢືນວ່າ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ຫາກຖືກຕາມເງື່ອນໄຂຂອງການກໍານົດລາຍຊື່ ຕາມທີ່ລະບຸໄດ້ໄວ້ໃນຍັດຕິຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໄດ້ວາງອອກບົນພື້ນຖານ ໝວດທີ VII ຂອງກົດບັດອົງການ ສປຊ ແມ່ນໃຫ້ກະຊວງການຕ່າງປະເທດ ສະເໜີຕື່ມລາຍຊື່ດັ່ງກ່າວເຂົ້າໃນ ບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໂດຍນໍາໃຊ້ແບບຟອມທີ່ເປັນມາດຕະຖານ ແລະ ຖືກຮັບຮອງເອົາ ໂດຍຄະນະກໍາມະການທີ່ກ່ຽວຂ້ອງຂອງສະພາຄວາມໝັ້ນຄົງ ອົງການ ສປຊ ຊຶ່ງລວມທັງຄໍາຖະແຫຼງລະອຽດກ່ຽວກັບກໍລະນີດັ່ງກ່າວ ເພື່ອສະໜັບສະໜູນການກໍານົດລາຍຊື່ເຂົ້າໃນບັນຊີ.

3.5.4 ກໍລະນີ ມີຂໍ້ມູນຫຼັກຖານວ່າບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ບໍ່ມີເງື່ອນໄຂ ຫຼື ບໍ່ໄດ້ ຢູ່ໃນເງື່ອນໄຂຂອງການຖືກກໍານົດລາຍຊື່ເຂົ້າໃນບັນຊີທີ່ໄດ້ລະບຸໃນຍັດຕິຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໄດ້ວາງອອກບົນພື້ນຖານ ໝວດທີ VII ຂອງກົດບັດ ອົງການ ສປຊ ໃຫ້ກະຊວງປ້ອງກັນຄວາມສະຫງົບເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ສໍານັກງານຂໍ້ມູນຕ້ານການຟອກເງິນ, ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ສະເໜີເອົາອອກຈາກບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງ ອົງການ ສປຊ.

ກໍລະນີ ພາຍຫຼັງການປະສານງານຂອງກະຊວງປ້ອງການຄວາມສະຫງົບ ຕາມທີ່ໄດ້ກໍານົດໄວ້ໃນວັກທີໜຶ່ງຂອງຂໍ້ນີ້ ຊຶ່ງກະຊວງປ້ອງກັນຄວາມສະຫງົບ ພິຈາລະນາແລ້ວ ເຫັນວ່າມີຫຼັກຖານພຽງພໍຢັ້ງຢືນວ່າບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ຫາກບໍ່ຖືກຕາມເງື່ອນໄຂຂອງການກໍານົດລາຍຊື່ ຕາມຍັດຕິຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໄດ້ວາງອອກບົນພື້ນຖານ ໝວດທີ VII ຂອງກົດບັດອົງການ ສປຊ ແມ່ນໃຫ້ກະຊວງການຕ່າງປະເທດ ສະເໜີເອົາລາຍຊື່ດັ່ງກ່າວອອກຈາກ ບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງອົງການ ສປຊ ໂດຍນໍາໃຊ້ແບບຟອມທີ່ເປັນມາດຕະຖານ ແລະ ຖືກຮັບຮອງເອົາໂດຍຄະນະກໍາມະການທີ່ກ່ຽວຂ້ອງຂອງສະພາຄວາມໝັ້ນຄົງ ອົງການ ສປຊ ຊຶ່ງລວມທັງການອະທິບາຍລະອຽດກ່ຽວກັບເຫດຜົນວ່າເປັນຫຍັງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ ຈຶ່ງບໍ່ຖືກຕາມເງື່ອນໄຂຂອງການກໍານົດເຂົ້າບັນຊີລາຍຊື່ອີກຕໍ່ໄປ.

3.6 ການແຈ້ງການ ແລະ ການສະເໜີ ເອົາເຂົ້າ-ເອົາອອກ ໃນບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພາຍໃນ ແລະ ຂອງລັດຕ່າງປະເທດຮ້ອງຂໍ ໃຫ້ປະຕິບັດ ດັ່ງນີ້:

3.6.1 ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ສໍານັກງານຂໍ້ມູນຕ້ານການຟອກເງິນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອພິຈາລະນາຄົ້ນຄວ້າສະເໜີເອົາເຂົ້າ-ເອົາອອກ ໃນບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍພາຍໃນ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ 3.1.1 ແລະ 3.1.3 ຂອງຄໍາສັ່ງສະບັບນີ້.

3.6.2 ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ສໍານັກງານຂໍ້ມູນຕ້ານການຟອກເງິນ, ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາລາຍຊື່ທີ່ຈະເອົາອອກ-ເອົາເຂົ້າ ບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການ

ຮ້າຍພາຍໃນ ກໍລະນີ ຫາກໄດ້ຮັບການຮ້ອງຂໍຈາກລັດຕ່າງປະເທດ ແລະ ໃຫ້ແຈ້ງຕອບກ່ຽວກັບຜົນການພິຈາລະນາດັ່ງກ່າວ ໄປຍັງລັດຕ່າງປະເທດທີ່ຮ້ອງຂໍ ໂດຍຜ່ານທາງກະຊວງການຕ່າງປະເທດ.

ການປະສານງານ ແລະ ການພິຈາລະນາ ຕື່ມລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເຂົ້າໃນບັນຊີລາຍຊື່ພາຍໃນ ແລະ ຕ່າງປະເທດຮ້ອງຂໍ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3.6.1, 3.6.2 ແລະ ມະຕິຮັບຮອງໂດຍ ຄຕຟງ ພາຍໃຕ້ຂໍ້ 3.1 ຂອງຄຳສັ່ງສະບັບນີ້ ແມ່ນຕ້ອງດຳເນີນການທັນທີ ໂດຍປາດສະຈາກການແຈ້ງໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເປົ້າໝາຍຮູ້ກ່ອນລ່ວງໜ້າ.

3.6.3 ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ສຳນັກງານຂໍ້ມູນຕ້ານການຟອກເງິນ, ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາສະເໜີໄປຍັງລັດຕ່າງປະເທດ ໃຫ້ກຳນົດລາຍຊື່ ເຂົ້າໃນ ຫຼື ລຶບອອກຈາກ ບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກໍລະນີ ເຫັນວ່າມີຂໍ້ມູນທີ່ພົວພັນ ຫຼື ບໍ່ພົວພັນກັບທຶນຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 2 ຂອງຄຳສັ່ງສະບັບນີ້ ຫຼື ຕາມທີ່ໄດ້ກຳນົດໄວ້ໃນຍັດຕິຂອງສະພາຄວາມໝັ້ນຄົງອົງການ ສປຊ ບົນພື້ນຖານ ໝວດທີ VII ຂອງກົດບັດອົງການ ສປຊ ຫຼື ມາດຕາ 3 ແລະ 7 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງກຳລັງເຄື່ອນໄຫວ ຫຼື ມີທຶນຢູ່ລັດຕ່າງປະເທດນັ້ນ.

3.6.4 ສຳນັກງານຂໍ້ມູນຕ້ານການຟອກເງິນ ຈະແຈ້ງບັນຊີລາຍຊື່ສະບັບປັບປຸງ ໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຮູ້ໂດຍທັນທີ ສ່ວນກະຊວງປ້ອງກັນຄວາມສະຫງົບ ຈະແຈ້ງບັນຊີລາຍຊື່ດັ່ງກ່າວ ໃຫ້ວິສາຫະກິດໄປສະນີ ແລະ ຂະແໜງການກ່ຽວຂ້ອງອື່ນໆ ຮູ້ໂດຍທັນທີ. ພ້ອມດຽວກັນນັ້ນ ໃຫ້ເຜີຍຂໍ້ມູນດັ່ງກ່າວຜ່ານເວັບໄຊຂອງລັດຖະບານ ຫຼື ເວັບໄຊ ຂອງອົງການຈັດຕັ້ງລັດກ່ຽວຂ້ອງ ຢ່າງເປັນປົກກະຕິ.

**4.** ການຮ້ອງຂໍ ກ່ຽວກັບການກຳນົດບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ປະຕິບັດ ດັ່ງນີ້:

4.1 ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບຈາກການກຳນົດລາຍຊື່ຢູ່ໃນບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສາມາດສົ່ງຄຳຮ້ອງຂໍ ໄປຍັງອົງການໄອຍະການປະຊາຊົນ ເພື່ອຂໍໃຫ້ພິຈາລະນາກ່ຽວກັບການຖືກກຳນົດລາຍຊື່ເຂົ້າໃນບັນຊີລາຍຊື່ ດັ່ງກ່າວ;

4.2 ອົງການໄອຍະການປະຊາຊົນ ປະສານກັບພາກສ່ວນກ່ຽວຂ້ອງ ເພື່ອຮັບພິຈາລະນາຄົ້ນຄວ້າຂໍ້ມູນຫຼັກຖານທີ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຮ້ອງຂໍກ່ຽວກັບການກຳນົດບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ສຳລັບຂັ້ນຕອນ ແລະ ວິທີການ ແມ່ນປະຕິບັດຕາມລະບຽບຫຼັກການທີ່ອົງການໄອຍະການປະຊາຊົນວາງອອກ.

4.3 ການຮ້ອງຂໍກ່ຽວກັບບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ເປັນບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ແມ່ນໃຫ້ແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນວັກທີສອງ ຂໍ້ 3.5.3 ແລະ ວັກທີສອງ ຂໍ້ 3.5.4 ຂອງຄຳສັ່ງສະບັບນີ້. ກະຊວງປ້ອງກັນຄວາມສະຫງົບ ຕ້ອງແຈ້ງໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຢູ່ໃນບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນບັນຊີຂອງສະພາຄວາມໝັ້ນຄົງ ອົງການ ສປຊ ນັ້ນຮັບຮູ້ກ່ຽວກັບທາງເລືອກ ເພື່ອຮ້ອງຂໍໃຫ້ເອົາ

ລາຍຊື່ອອກຈາກບັນຊີລາຍຊື່ດັ່ງກ່າວ ດ້ວຍການສົ່ງຄໍາຮ້ອງຂໍ ໂດຍກົງໄປຍັງຫ້ອງການກວດກາເອກະລາດ ຂອງອົງການ ສປຊ.

5. ການກັກ, ການຍຶດ ແລະ ການອາຍັດ ທຶນ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ປະຕິບັດ ດັ່ງນີ້:

5.1 ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 17 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ:

- ຕ້ອງກວດກາລູກຄ້າຂອງຕົນ ທີ່ມີການເຄື່ອນໄຫວ ຫຼື ມີສ່ວນພົວພັນກັບທຶນ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 2 ຂອງຄໍາສັ່ງສະບັບນີ້ ຢ່າງເປັນປະຈໍາ ແລະ ຕ້ອງກວດກາທັນທີ ພາຍຫຼັງທີ່ໄດ້ຮັບການແຈ້ງກ່ຽວກັບບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຈາກສໍານັກງານຂໍ້ມູນຕ້ານການຟອກເງິນ;
- ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງນໍາໃຊ້ມາດຕະການເບື້ອງຕົ້ນ ໃນການຢຸດຕິ ແລະ ໃຫ້ກັກທຶນ ດັ່ງກ່າວທັນທີ ເມື່ອເຫັນວ່າລູກຄ້າຂອງຕົນ ແມ່ນຜູ້ທີ່ໄດ້ຖືກກໍານົດບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼື ມີການເຄື່ອນໄຫວເຮັດທຸລະກໍາທີ່ພົວພັນກັບທຶນ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 2 ຂອງຄໍາສັ່ງສະບັບນີ້. ພ້ອມດຽວກັນນັ້ນ ກໍ່ຕ້ອງລາຍງານດ່ວນໄປຍັງກະຊວງປ້ອງກັນຄວາມສະຫງົບ ແລະ ສໍານັກງານຂໍ້ມູນຕ້ານການຟອກເງິນ;
- ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ອອກຄໍາສັ່ງຍຶດ ຫຼື ອາຍັດ ທຶນດັ່ງກ່າວທັນທີ ເມື່ອໄດ້ຮັບການລາຍງານຈາກຫົວໜ່ວຍທີ່ມີໜ້າທີ່ລາຍງານ.

ຄໍາສັ່ງຍຶດ ຫຼື ອາຍັດ ທຶນຕ້ອງຍັງຄົງມີຜົນສັກສິດ ຈົນກ່ວາຈະສິ້ນສຸດການດໍາເນີນຄະດີ ຫຼື ມີຄໍາຕັດສິນຂອງສານ.

ພາຍໃນກໍານົດເວລາສາມສິບວັນ, ນັບແຕ່ວັນອອກຄໍາສັ່ງຍຶດ ຫຼື ອາຍັດ ທຶນຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 2 ຂອງຄໍາສັ່ງສະບັບນີ້ ກະຊວງປ້ອງກັນຄວາມສະຫງົບ ມີໜ້າທີ່ພິຈາລະນາຕົກລົງຕໍ່ຜູ້ຖືກສົງໄສ, ທຶນ ດັ່ງກ່າວ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 6 ຂອງຄໍາສັ່ງສະບັບນີ້. ສໍາລັບການພິຈາລະນາຕົກລົງຕໍ່ຜູ້ຖືກສົງໄສ ແລະ ທຶນທີ່ມີລັກສະນະຊັບຊ້ອນ ຫຼື ຕ້ອງໄດ້ກວດສອບ, ກວດກາຢູ່ຫຼາຍບ່ອນ ແມ່ນບໍ່ໃຫ້ກາຍຫົກສິບວັນ. ສ່ວນກໍລະນີທີ່ຕ້ອງໄດ້ກວດສອບ, ຮັບໂຮມຫຼັກຖານຢູ່ຕ່າງປະເທດນັ້ນ ແມ່ນບໍ່ໃຫ້ກາຍເກົ້າສິບວັນນັບແຕ່ວັນອອກຄໍາສັ່ງ ຍຶດ ຫຼື ອາຍັດດັ່ງກ່າວເປັນຕົ້ນໄປ.

ກໍລະນີ ເຫັນວ່າທຶນ ດັ່ງກ່າວຫາກບໍ່ກ່ຽວຂ້ອງ ຫຼື ພົວພັນກັບຜູ້ທີ່ຢູ່ໃນບັນຊີລາຍຊື່ ຜູ້ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ກະຊວງປ້ອງກັນຄວາມສະຫງົບ ແຈ້ງເປັນລາຍລັກອັກສອນໄປຍັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເພື່ອຮັບຊາບ ແລະ ຍົກເລີກການນໍາໃຊ້ມາດຕະການເບື້ອງຕົ້ນດັ່ງກ່າວ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຈະບໍ່ມີຄວາມຮັບຜິດຊອບຕໍ່ທຸກການກະທໍາ ຫຼື ບໍ່ກະທໍາ ຫາກເຮັດດ້ວຍຄວາມບໍລິສຸດໃຈ ແລະ ບໍ່ແມ່ນຍ້ອນຄວາມປະມາດ ໃນການປະຕິບັດໜ້າທີ່ຂອງຕົນ ຫຼື ການປະຕິບັດຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 5.1 ຂອງຄໍາສັ່ງສະບັບນີ້.

5.2 ການກັກ, ການຍຶດ ແລະ ການອາຍັດທຶນ ທີ່ໂອນ, ສົ່ງຜ່ານ ແລະ ໃຊ້ບໍລິການທາງໄປສະນີ:

- ມອບໃຫ້ວິສາຫະກິດໄປສະນີ ກວດກາເປັນປະຈຳ ແລະ ຕ້ອງກວດກາທັນທີໄປສະນີພັນ, ພັດສະດຸໄປສະນີ ຫຼື ຖົງເມ ພາຍຫຼັງທີ່ໄດ້ຮັບການແຈ້ງກ່ຽວກັບບັນຊີລາຍຊື່ຂອງຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຈາກກະຊວງປ້ອງກັນຄວາມສະຫງົບ;
- ວິສາຫະກິດໄປສະນີ ຕ້ອງນຳໃຊ້ມາດຕະການເບື້ອງຕົ້ນ ໃນການຢຸດຕິ ແລະ ໃຫ້ກັກທຶນ ດັ່ງກ່າວທັນທີ ເມື່ອເຫັນວ່າລູກຄ້າຂອງຕົນແມ່ນຜູ້ທີ່ໄດ້ຖືກກຳນົດບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼື ມີການເຄື່ອນໄຫວເຮັດທຸລະກຳທີ່ພົວພັນກັບທຶນ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 2 ຂອງຄຳສັ່ງສະບັບນີ້. ພ້ອມດຽວກັນນັ້ນ ກໍ່ຕ້ອງລາຍງານດ່ວນໄປຍັງກະຊວງປ້ອງກັນຄວາມສະຫງົບ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ;
- ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ອອກຄຳສັ່ງຍຶດ ຫຼື ອາຍັດທຶນດັ່ງກ່າວທັນທີ ເມື່ອໄດ້ຮັບການລາຍງານຈາກຈາກວິສາຫະກິດໄປສະນີ;
- ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ອອກຄຳສັ່ງຍຶດ ຫຼື ອາຍັດ ທຶນທັນທີ ໃນກໍລະນີ ເຊັ່ງໜ້າ ແລະ ຮີບດ່ວນ ຫາກເຫັນວ່າມີໄປສະນີພັນ, ພັດສະດຸໄປສະນີ ຫຼື ຖົງເມ ຊຶ່ງໄດ້ສົ່ງຈາກ ສປປ ລາວ ໄປຍັງຕ່າງປະເທດ ຫຼື ຈາກຕ່າງປະເທດສົ່ງເຂົ້າມາ ສປປ ລາວ ທີ່ບັນຈຸ ຫຼື ມີທຶນຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 2 ຂອງຄຳສັ່ງສະບັບນີ້ ພາຍໃນກຳນົດເວລາ ສີ່ສິບແປດ ຊົ່ວໂມງ, ພ້ອມດຽວກັນນັ້ນ ກະຊວງປ້ອງກັນຄວາມສະຫງົບ ຕ້ອງເປີດ ຫຼື ກວດກາ ເພື່ອພິສູດຂໍ້ເທັດຈິງ.

ຄຳສັ່ງຍຶດ ຫຼື ອາຍັດ ທຶນ ຕ້ອງຍັງຄົງມີຜົນສັກສິດ ຈົນກ່ວາຈະສິ້ນສຸດການດຳເນີນຄະດີ ຫຼື ມີຄຳຕັດສິນຂອງສານ.

ພາຍໃນກຳນົດເວລາສາມສິບວັນ, ນັບແຕ່ວັນອອກຄຳສັ່ງຍຶດ ຫຼື ອາຍັດ ທຶນ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ມີໃນໄປສະນີພັນ, ພັດສະດຸໄປສະນີ ຫຼື ຖົງເມ, ກະຊວງປ້ອງກັນຄວາມສະຫງົບ ມີໜ້າທີ່ພິຈາລະນາຕົກລົງຕໍ່ຜູ້ຖືກສົງໄສ, ທຶນດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 6 ຂອງຄຳສັ່ງສະບັບນີ້. ສຳລັບການພິຈາລະນາຕົກລົງຕໍ່ຜູ້ຖືກສົງໄສ, ທຶນທີ່ມີລັກສະນະຊັບຊ້ອນ ຫຼື ຕ້ອງໄດ້ກວດສອບ, ກວດກາຢູ່ຫຼາຍບ່ອນ ແມ່ນບໍ່ໃຫ້ກາຍຫົກສິບວັນ. ສ່ວນກໍລະນີທີ່ຕ້ອງໄດ້ກວດສອບ, ຮີບໂຮມຫຼັກຖານຢູ່ຕ່າງປະເທດນັ້ນ ແມ່ນບໍ່ໃຫ້ກາຍເກົ້າສິບວັນ ນັບແຕ່ວັນອອກຄຳສັ່ງ ຍຶດ ຫຼື ອາຍັດດັ່ງກ່າວເປັນຕົ້ນໄປ.

ກໍລະນີ ເຫັນວ່າທຶນທີ່ຖືກຍຶດ ຫຼື ອາຍັດນັ້ນ ຫາກບໍ່ກ່ຽວຂ້ອງ ຫຼື ພົວພັນກັບຜູ້ທີ່ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ກະຊວງປ້ອງກັນຄວາມສະຫງົບ ແຈ້ງເປັນລາຍລັກອັກສອນໄປຍັງວິສາຫະກິດໄປສະນີ ເພື່ອຮັບຊາບ ແລະ ຍົກເລີກການນຳໃຊ້ມາດຕະການເບື້ອງຕົ້ນດັ່ງກ່າວ.

ວິສາຫາກິດໄປສະນີ ຈະບໍ່ມີຄວາມຮັບຜິດຊອບຕໍ່ທຸກການກະທຳ ຫຼື ບໍ່ກະທຳ ຫາກເຮັດດ້ວຍຄວາມບໍລິສຸດໃຈ ແລະ ບໍ່ແມ່ນຍ້ອນຄວາມປະມາດ ໃນການປະຕິບັດໜ້າທີ່ຂອງຕົນ ຫຼື ການປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 5.1 ຂອງຄຳສັ່ງສະບັບນີ້.

5.3 ການກັກ, ການຍຶດ ແລະ ການອາຍັດທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຢູ່ພາກສ່ວນອື່ນ:

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຕ້ອງນໍາໃຊ້ມາດຕະການເບື້ອງຕົ້ນ ເພື່ອຢຸດຕິ ແລະ ກັກທຶນຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 2 ຂອງຄໍາສັ່ງສະບັບນີ້ ໂດຍທັນທີ ເມື່ອພົບວ່າບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕົນກໍາລັງສ້າງສາຍພົວພັນທາງດ້ານທຸລະກິດ ຫຼື ເຄື່ອນໄຫວທຸລະກໍາຢູ່ນັ້ນ ໄດ້ຖືກກໍານົດລາຍຊື່ເຂົ້າຢູ່ໃນບັນຊີລາຍຊື່ຜູ້ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼື ພົບວ່າບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ ພົວພັນກັບທຶນ ຕາມທີ່ກໍານົດໄດ້ໄວ້ໃນ ຂໍ້ 2 ຂອງຄໍາສັ່ງສະບັບນີ້ ຕ້ອງລາຍງານໄປຍັງກະຊວງປ້ອງກັນຄວາມສະຫງົບ ແລະ ສໍານັກງານຂໍ້ມູນຕ້ານການຟອກເງິນ ໂດຍທັນທີ.

ກໍລະນີ ຜ່ານການເຄື່ອນໄຫວວຽກງານວິຊາສະເພາະ, ການພິຈາລະນາຂໍ້ມູນຂ່າວກອງ ຫຼື ການແຈ້ງຄວາມຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການກວດພົບ ຫຼື ການພົບເຫັນ ທຶນຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 2 ຂອງຄໍາສັ່ງສະບັບນີ້ ໃຫ້ກະຊວງປ້ອງກັນຄວາມສະຫງົບ ປະສານສົມທົບກັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອກວດສອບຂໍ້ເທັດຈິງ, ຢັ້ງຢືນວ່າທຶນນັ້ນ ມີສ່ວນພົວພັນ ຫຼື ບໍ່ມີສ່ວນພົວພັນ ແລະ ແກ້ໄຂຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 6 ຂອງຄໍາສັ່ງສະບັບນີ້ ຊຶ່ງຕ້ອງອອກຄໍາສັ່ງຍຶດ ຫຼື ອາຍັດທຶນດັ່ງກ່າວທັນທີ ຫາກມີຂໍ້ມູນຫຼັກຖານຢັ້ງຢືນວ່າມີສ່ວນພົວພັນແທ້.

ພາຍໃນກໍານົດເວລາສາມສິບວັນ, ນັບແຕ່ວັນອອກຄໍາສັ່ງຍຶດ ຫຼື ອາຍັດ ທຶນຕາມທີ່ໄດ້ກໍານົດໄວ້ໃນຂໍ້ 2 ຂອງຄໍາສັ່ງສະບັບນີ້ ກະຊວງປ້ອງກັນຄວາມສະຫງົບ ມີໜ້າທີ່ພິຈາລະນາຕົກລົງຕໍ່ຜູ້ຖືກສົງໄສ, ທຶນດັ່ງກ່າວຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 6 ຂອງຄໍາສັ່ງສະບັບນີ້. ສໍາລັບການພິຈາລະນາຕົກລົງຕໍ່ຜູ້ຖືກສົງໄສ, ທຶນທີ່ມີລັກສະນະຊັບຊ້ອນ ຫຼື ຕ້ອງໄດ້ກວດສອບ, ກວດກາຢູ່ຫຼາຍບ່ອນ ແມ່ນບໍ່ໃຫ້ກາຍຫົກສິບວັນ. ສ່ວນກໍລະນີທີ່ຕ້ອງໄດ້ກວດສອບ, ຮິບໂຮມຫຼັກຖານຢູ່ຕ່າງປະເທດນັ້ນ ແມ່ນບໍ່ໃຫ້ກາຍເກົ້າສິບວັນ ນັບແຕ່ວັນອອກຄໍາສັ່ງ ຍຶດ ຫຼື ອາຍັດດັ່ງກ່າວ ເປັນຕົ້ນໄປ.

**6.** ການແກ້ໄຂກ່ຽວກັບທຶນທີ່ໄດ້ມີການກັກ, ຍຶດ ແລະ ອາຍັດ ໃຫ້ປະຕິບັດ ດັ່ງນີ້:

6.1 ສົ່ງຄືນໃຫ້ຜູ້ເປັນເຈົ້າຂອງ ທີ່ຄຸ້ມຄອງຢ່າງຖືກຕ້ອງຕາມກົດໝາຍ ຖ້າຫາກທຶນນັ້ນຖືກຜູ້ອື່ນຄຸ້ມຄອງ ຫຼື ນໍາໃຊ້ໂດຍຜິດກົດໝາຍ ເຂົ້າໃນການເຄື່ອນໄຫວກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

6.2 ອະນຸຍາດໃຫ້ນໍາໃຊ້ເປັນຄ່າໃຊ້ຈ່າຍທີ່ຈໍາເປັນໃຫ້ແກ່ຊີວິດການເປັນຢູ່ຂອງຜູ້ທີ່ຖືກ ຍຶດ ຫຼື ອາຍັດ ທຶນ ແລະ ຄ່າໃຊ້ຈ່າຍການປະຕິບັດພັນທະທາງດ້ານກົດໝາຍອື່ນ ທີ່ກ່ຽວຂ້ອງຂອງ ຜູ້ທີ່ຖືກຍຶດ ຫຼື ອາຍັດ ທຶນ ແລະ ພິຈາລະນາ ຄ່າໃຊ້ຈ່າຍທີ່ຈໍາເປັນໃນການຫາລ້ຽງຊີບຂອງບຸກຄົນ ຊຶ່ງໄດ້ຖືກຍຶດ, ອາຍັດ ທຶນຢູ່ ແລະ ຄ່າໃຊ້ຈ່າຍສໍາລັບພັນທະທາງກົດໝາຍອື່ນ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຖືກຍຶດ, ອາຍັດ ທຶນຢູ່ ແລະ ອະນຸຍາດໃຫ້ນໍາໃຊ້ທຶນ ຕາມຍັດຕິສະບັບເລກທີ 1452 (ປີ 2002), 1735 (ປີ 2006) ແລະ ຍັດຕິອື່ນໆ;

6.3 ຍົກເລີກການຍຶດ, ການອາຍັດ ແລະ ສົ່ງທຶນຄືນ ຖ້າຫາກຜູ້ນັ້ນ ຫາກຖືກເອົາອອກ ຫຼື ລຶບຊື່ອອກ ຈາກບັນຊີລາຍຊື່ຜູ້ ທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

6.4 ກໍລະນີ ບໍ່ສາມາດລະບຸຜູ້ເປັນເຈົ້າຂອງ ຫຼື ຜູ້ທີ່ຄຸ້ມຄອງ ທຶນຖືກຕ້ອງຕາມກົດໝາຍໄດ້ ໃຫ້ຮິບມາເປັນຂອງລັດ ຫຼື ທໍາລາຍຖິ້ມ ຕາມລະບຽບກົດໝາຍຂອງ ສປປ ລາວ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ໄດ້ຮັບຜົນກະທົບຈາກການກັກ, ຍຶດ ແລະ ອາຍັດ ທຶນໃຫ້ຮ້ອງຂໍໄປຫາອົງການໄອຍະການປະຊາຊົນ ເພື່ອຂໍໃຊ້ມາດຕະການໃດໜຶ່ງ ແກ້ໄຂຕາມທີ່ໄດ້ລະບຸໄວ້ໃນ ຂໍ້ 6.1 ຫາ 6.3 ຂອງຄຳສັ່ງສະບັບນີ້.

ກໍລະນີ ອົງການໄອຍະການປະຊາຊົນ ພິຈາລະນາກ່ຽວກັບທຶນ ທີ່ໄດ້ຖືກຍຶດ ຫຼື ອາຍັດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 6.1 ຫາ 6.3 ຂອງຄຳສັ່ງສະບັບນີ້ ໃຫ້ອົງການໄອຍະການປະຊາຊົນ ກຳນົດເງື່ອນໄຂທີ່ຈຳເປັນຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອປ້ອງກັນບໍ່ໃຫ້ມີການນຳເອົາທຶນນັ້ນ ໄປເຄື່ອນໄຫວໃນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼື ການກະທຳທີ່ເປັນການກໍ່ການຮ້າຍ.

ກໍລະນີ ອົງການໄອຍະການປະຊາຊົນ ໄດ້ພິຈາລະນາແກ້ໄຂກ່ຽວກັບທຶນທີ່ໄດ້ຖືກຍຶດ ຫຼື ອາຍັດໄວ້ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 6.2 ຂອງຄຳສັ່ງສະບັບນີ້. ອົງການໄອຍະການປະຊາຊົນ ຈະຕ້ອງສະໜອງທຸກເອກະສານ ແລະ ໃບແຈ້ງການທີ່ຈຳເປັນໃຫ້ຄະນະກຳມະການກ່ຽວຂ້ອງຂອງສະພາຄວາມໝັ້ນຄົງ ອົງການ ສປຊ ເພື່ອຂໍອະນຸມັດຈາກຄະນະກຳມະການກ່ຽວຂ້ອງຂອງສະພາຄວາມໝັ້ນຄົງ ອົງການ ສປຊ ໂດຍຜ່ານທາງກະຊວງການຕ່າງປະເທດ ກ່ອນທີ່ຈະມີການນຳໃຊ້ທຶນດັ່ງກ່າວ.

ທຶນທີ່ຖືກກັກ, ຍຶດ ແລະ ອາຍັດ ຕ້ອງຍັງຄົງຖືກກັກ, ອາຍັດ ແລະ ຍຶດ ຈົນກ່ວາຈະມີການນຳໃຊ້ມາດຕະການໃດໜຶ່ງ ເພື່ອແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 6.1 ຫາ 6.4 ຂອງຄຳສັ່ງສະບັບນີ້.

7. ຄຳສັ່ງສະບັບນີ້ ໃຊ້ປ່ຽນແທນຄຳສັ່ງສະບັບເລກທີ 61/ນຍ ລົງວັນທີ 13 ພະຈິກ 2015 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງສິງ ທຳມະວົງ